**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0507 /ທຄຕລ.2026.......
ນະຄອນຫຼວງວຽງຈັນ, ວັນທີ:.....17 FEB 2026.........

# ໜັງສືແຈ້ງການ

**ຮຽນ:** ທ່ານລູກຄ້າ ແລະ ຜູ້ລົງທຶນຂອງ ທຄຕລ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

**ເລື່ອງ:** ຊີ້ແຈງ ກ່ຽວກັບ ຄວາມປອດໄພຂອງລະບົບທະນາຄານ ແລະ ສາເຫດການຖືກລັກໂອນເງິນ (ເງິນຖືກດູດ)

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອຕອບໂຕ້ຂໍ້ມູນທີ່ບິດເບືອນໃນສື່ສັງຄົມອອນລາຍໃນໄລຍະຜ່ານມາ, ທຄຕລ ຂໍຢັ້ງຢືນວ່າ ການຖືກລັກໂອນເງິນອອກຈາກບັນຊີ ບໍ່ໄດ້ເກີດຈາກລະບົບທະນາຄານ ແຕ່ແມ່ນເກີດຈາກກຸ່ມມິດສາຊີບທີ່ນໍາໃຊ້ຫຼາຍວິທີການຫຼອກລວງເຈົ້າຂອງບັນຊີ ເພື່ອໃຫ້ສາມາດເຂົ້າຄວບຄຸມບັນຊີຂອງລູກຄ້າທີ່ຕົກເປັນເຫຍື່ອ ເຊັ່ນ:

1) **ການດາວໂຫຼດແອັບປອມ:** (Fake App / Malware) ທີ່ແຝງຕົວມາໃນຮູບແບບຕ່າງໆ;
2) **ການຖືກຄວບຄຸມອຸປະກອນ:** ຜ່ານໂປຣແກຣມສອດແນມ ຫຼື ການເຂົ້າເຖິງລະບົບມືຖື (Device Compromise).
3) **ການປະກອບຂໍ້ມູນສ່ວນຕົວ:** ຜ່ານແບບຟອມ ຫຼື ລິ້ງປອມທີ່ມິດສາຊີບສ້າງຂຶ້ນ.
4) **ການເປີດເຜີຍຂໍ້ມູນສໍາຄັນສ່ວນຕົວ** ເຊັ່ນ: ລະຫັດຜ່ານ ແລະ ລະຫັດ OTP ໃຫ້ບຸກຄົນອື່ນ.
5) **ການຫຼອກໃຫ້ເຈົ້າຂອງບັນຊີໂອນເງິນໃຫ້ແກ່ມິດສາຊີບໂດຍກົງ** ເຊັ່ນ: ແອບອ້າງເປັນເຈົ້າຂອງຮ້ານທີ່ທ່ານເຮັດຊື້-ຂາຍອອນລາຍນໍາ, ຫຼອກວ່າທ່ານຖືກຫວຍ ຫຼື ລາງວັນໃດໜຶ່ງ ແລ້ວບອກໃຫ້ທ່ານໂອນເງິນຊໍາລະຄ່າພາສີ ແລະ ທໍານຽມຕ່າງໆກ່ອນ.

ທຄຕລ ຂໍຢັ້ງຢືນວ່າ: ລະບົບຂອງ ທຄຕລ ມີຄວາມປອດໄພ ເຊິ່ງທຸກໆການເຄື່ອນໄຫວບັນຊີໃນລະບົບ (Log) ແມ່ນຖືກບັນທຶກໄວ້ຢ່າງລະອຽດ ແລະ ສາມາດກວດສອບຄືນໄດ້ທຸກເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອເພີ່ມສະຕິລະວັງຕົວ ແລະ ຫ້າມເຮັດ 5 ຂໍ້ຂ້າງເທິງນີ້ ເພື່ອບໍ່ໃຫ້ຕົກເປັນເຫຍື່ອຂອງກຸ່ມມິດສາຊີບ.

ດ້ວຍຄວາມເຄົາລົບຢ່າງສູງ,

**ຜູ້ອໍານວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ

ນ. ສາຍສະໝອນ ຈັນທະຈັກ